# ກິດຈະກຳທີ່ຈະຕ້ອງເຮັດໃຫ້ແລ້ວເສັດຢູ່ເຮືອນ

## ຂໍ້ມູນສຳລັບພໍ່ແມ່ແລະຜູ້ດູແລ

ເພື່ອເສີມສ້າງສິ່ງທີ່ພວກເຂົາຮຽນຮູ້ຢູ່ໂຮງຮຽນ ລູກຂອງທ່ານຈະໄດ້ຮັບກິດຈະກຳທີ່ພວກເຂົາອາດຢາກເຮັດຢູ່ເຮືອນ.

ຊຸກຍູ້ໃຫ້ລູກຂອງທ່ານເຮັດກິດຈະກຳໃຫ້ສຳເລັດ ແລະ ໂອ້ລົມກັບພວກເຂົາກ່ຽວກັບວຽກງານຂອງພວກເຂົາ. ການສະໜັບສະໜູນລູກຂອງທ່ານດ້ວຍວິທີນີ້ຈະເຮັດໃຫ້ທ່ານເຂົ້າໃຈສິ່ງທີ່ພວກເຂົາພວມກຳລັງຮຽນຮູ້ຢູ່ໂຮງຮຽນ ແລະ ສະແດງໃຫ້ພວກເຂົາເຫັນຄຸນຄ່າຂອງການສຶກສາ ແລະ ການຮຽນຮູ້.

ການເຮັດກິດຈະກຳຢູ່ເຮືອນໃຫ້ສຳເລັດຈະເຮັດໃຫ້ລູກຂອງທ່ານມີໂອກາດ:

- ທົບທວນຄືນສິ່ງທີ່ພວກເຂົາໄດ້ຮຽນຮູ້ຢູ່ໂຮງຮຽນ,
- ເສີມສ້າງຄວາມເຂົ້າໃຈ ແລະ ທັກສະຂອງພວກເຂົາ,
- ພັດທະນາທັກສະການຮຽນທີ່ພວກເຂົາຈະໃຊ້ໄປຕະຫຼອດຊີວິດ.

### ການສ້າງນິໄສທີ່ດີຢູ່ເຮືອນ

ການມີນິໄສທີ່ດີຈະຊ່ວຍໃຫ້ລູກຂອງທ່ານໄປຕະຫຼອດຊີວິດໃນໂຮງຮຽນ ແລະ ຊີວິດການເຮັດວຽກ.

- ກຳນົດເວລາປົກກະຕິໃນການເຮັດກິດຈະກຳໃຫ້ສຳເລັດ – ອັນນີ້ຄວນຈະເປັນເວລາດຽວກັນໃນແຕ່ລະມື້.
- ເລືອກເວລາທີ່ເໝາະສົມກັບລູກຂອງທ່ານ (ເດັກນ້ອຍບາງຄົນມີສະມາທິຕັ້ງໃຈດີກວ່າໃນຕອນເຊົ້າ, ບາງຄົນໃນຕອນບ່າຍ).

ລູກຂອງທ່ານຈະພົບວ່າມັນງ່າຍຂຶ້ນຫຼາຍຖ້າພວກເຂົາມີພື້ນທີ່ທີ່ສະດວກສະບາຍ.

- ຈັດພື້ນທີ່ທີ່ງຽບໆ ແລະ ມີແສງແຈ້ງສົມຄວນພໍໃຫ້ລູກທ່ານເຮັດວຽກໄດ້.
- ມີສິ່ງຂອງທີ່ພວກເຂົາຕ້ອງການຢູ່ໃກ້ໆ ເຊັ່ນ ສໍ ເຈ້ຍ ຫຼື ຄອມພິວເຕີ.
- ຊອກຫາສະຖານທີ່ທີ່ບໍ່ມີສິ່ງລົບກວນ (ຕົວຢ່າງ, ຫ່າງຈາກໂທລະທັດ ຫຼື ເກມຄອມພິວເຕີ).

### ຂ້ອຍສາມາດຊ່ວຍລູກຂອງຂ້ອຍໄດ້ແນວໃດ?

- ມີຄວາມຢາກຮູ້ຢາກເຫັນ ແລະ ຖາມຄຳຖາມກ່ຽວກັບສິ່ງທີ່ພວກເຂົາກຳລັງເຮັດຢູ່.
- ຂໍໃຫ້ພວກເຂົາສອນທ່ານໃນສິ່ງທີ່ພວກເຂົາຮຽນຢູ່.
- ກວດເບິ່ງວ່າພວກເຂົາຕ້ອງການຄວາມຊ່ວຍເຫຼືອຫຼືບໍ່.
- ຍ້ອງຍໍຄວາມພະຍາຍາມຂອງພວກເຂົາ ໃນຂະນະທີ່ພວກເຂົາພະຍາຍາມ ແລະ ເຮັດກິດຈະກຳໃຫ້ສຳເລັດ.
- ຂໍໃຫ້ຄູຊ່ວຍທ່ານເຂົ້າເຖິງແຫຼ່ງຂໍ້ມູນທີ່ມີຢູ່ທີ່ສະໜັບສະໜູນພໍ່ແມ່ ແລະ ຜູ້ດູແລ.

ຈຳໄວ້ວ່າ ການເຮັດກິດຈະກຳຢູ່ເຮືອນຄວນຈະເປັນປະສົບການໃນທາງບວກສຳລັບລູກຂອງທ່ານ.

ແຈ້ງໃຫ້ຄູສອນຮູ້ວ່າລູກຂອງທ່ານຕ້ອງການຄວາມຊ່ວຍເຫຼືອເພີ່ມເຕີມ ຫຼື ການປັບປ່ຽນສະເພາະເພື່ອເຮັດກິດຈະກຳໃຫ້ສຳເລັດ.

### ບໍລິການ ນາຍພາສາ ທາງໂທລະສັບ

ຖ້າທ່ານຕ້ອງການນາຍພາສາ ເພື່ອຊ່ວຍທ່ານຕິດຕໍ່ໂຮງຮຽນ ກະຣຸນາໂທຫາ ໝາຍເລກ 131 450 ບອກຜູ້ຮັບສາຍເຖິງ ພາສາທີ່ທ່ານຕ້ອງການແລະຂໍໃຫ້ເຂົາຕິດຕໍ່ໂຮງຮຽນ ໃຫ້ທ່ານ. ຜູ້ຮັບສາຍຈະຊອກເອົານາຍພາສາມາເວົ້າສາຍເພື່ອຊ່ວຍໃນການໂອ້ລົມຂອງທ່ານ. ທ່ານບໍ່ຕ້ອງເສັຍຄ່າໃດໆໃນບໍຣິການນີ້.